## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 16 ເມສາ 2023 (04-16-2023)

---

## ແຫຼ່ງຂອງການທົດລອງ

*ອາຫານຫຍັງທີ່ທ່ານເກືອບຈະບໍ່ເຄີຍປະຕິເສດຈັກເທື່ອ?*

**ຈຸດສຳຄັນໃນບົດຮຽນ: ເມື່ອເຮົາຕົກຢູ່ໃນຄວາມບາບພວກເຮົາຈະບໍ່ຖິ້ມໂທດໃສ່ຜູ້ໃດນອກຈາກຕົວເຮົາເອງ.**

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ພວກເຮົາທຸກຄົນລ້ວນແຕ່ມີອາຫານໂປດ. ກິ່ນຂອງມັນເຕະດັງພວກເຮົາ, ແລະພວກເຮົາກໍຊອກຫາສ້ອມຕຽມໄວ້. ມັນຍົ້ວເຍົ້າໃຈແທ້ໆ! ການຢາກກິນເຄັກຈັກຄຳນຶ່ງອາດຈະບໍ່ຈຳເປັນເປັນສິ່ງທີ່ບໍ່ດີ, ແຕ່ສ່ວນຫຼາຍພວກເຮົາມັກຈະຖືກລໍ້ລວງໃຫ້ຍອມຕາມໃຈຂອງພວກເຮົາເອງໃນທາງອື່ນໆ. ການທົດລອງແມ່ນ "ເຫຍື່ອລໍ້ແລະສັບປຸ່ງນ." ມັນສັນຍາວ່າບາງສິ່ງບາງຢ່າງທີ່ດີ, ແຕ່ມັນນຳສິ່ງສິ່ງທີ່ເປັນອັນຕະລາຍ, ເຖິງກັບວ່າເຖິງແກ່ຄວາມຕາຍໄດ້.

ປາຄົ້ນພົບວິທີນີ້ໃນທາງທີ່ຍາກ. ຕອນຍັງນ້ອຍ, ຂ້າພະເຈົ້າມັກຕຶກເບັດ. ຂ້າພະເຈົ້າຈະປັ້ນເຂົ້າຈີ່ຕິດໃສ່ດວງເບັດ, ແລ້ວກໍໂຍນມັນລົງນໍ້າ, ແລະເບິ່ງປາຂນາດນ້ອຍແລ່ນສັບສົນກັນເໝືອນເປັນບ້າ. ຂ້າພະເຈົ້າຈະຈັບປານ້ອຍແລະນຳມາໃຊ້ເປັນເຫຍື່ອເພື່ອຈະລໍ້ຈັບປາໂຕໃຫຍ່ກວ່າ. ມັນເຮັດໃຫ້ຂ້າພະເຈົ້າຕື່ນເຕັ້ນທີ່ຈະຢ່ອນເຫຍື່ອລົງໃນນໍ້າແລະເບິ່ງວ່າຂ້າພະເຈົ້າຈະສາມາດລໍ້ລວງປາ ແບັສ໌ ໃຫ້ມາກິນເບັດໄດ້ບໍ່, ມັນມ່ວນສຳລັບຂ້າພະເຈົ້າແຕ່ບໍ່ມ່ວນສຳລັບປາ.

ໃຜລໍ້ລວງພວກເຮົາໃຫ້ເຮັດບາບ? ເຮົາອາດຈະຖິ້ມໂທດໃສ່ຊາຕານ-"ມານຮ້າຍເຮັດໃຫ້ຂ້ອຍເຮັດມັນ!"-ແຕ່ຄຳຕອບກໍໃກ້ເປົ້າຫຼາຍ. ຢ່າງຂອບພຣະຄຸນ, ການແກ້ໄຂຢູ່ໃກ້ ໆເໝືອນກັບຄຳອ້ອນວອນອະທິຖານ.

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ຢາໂກໂບ 1:13</u>

*13. ເມື່ອຜູ້ໃດຖືກລໍ້ລວງໃຫ້ຫຼົງ ຢ່າໃຫ້ຜູ້ນັ້ນເວົ້າວ່າ, "ພຣະເຈົ້າຊົງລໍ້ລວງຂ້າພະເຈົ້າໃຫ້ຫຼົງ" ເພາະວ່າຄວາມຊົ່ວຈະມາລໍ້ລວງພຣະເຈົ້າໃຫ້ຫຼົງບໍ່ໄດ້ ແລະພຣະອົງເອງກໍບໍ່ຊົງລໍ້ລວງຜູ້ໃດໃຫ້ຫຼົງຈັກເທື່ອ.*

ທ່ານຢາໂກໂບໄດ້ໃຊ້ຄຳທີ່ໝາຍເຖິງການທົດລອງ, ການທົດສອບແລະການລໍ້ລວງ, ແຕ່ໃນພາສາຕົ້ນສະບັບເພິ່ນກຳລັງໃຊ້ຄຳທີ່ມາຈາກຣາກເຫງົ້າດຽວກັນ. ດັ່ງນັ້ນ, ເມື່ອໃດທີ່ທ່ານອ້າງເຖິງການທົດລອງຫຼືການທົດສອບ ແລະເມື່ອໃດທີ່ເພິ່ນອ້າງເຖິງການລໍ້ລວງ? ເນື້ອໃນໃຈຄວາມໃຫ້ຄຳຕອບ. ໃນການເລີ້ມຕົ້ນພຣະທັມຢາໂກໂບບົດ 1, ຢາໂກໂບໄດ້ເວົ້າຢ່າງຈະແຈ້ງກ່ຽວກັບການທົດລອງ (ຢາໂກໂບ 1:1-12). ການທົດລອງແມ່ນຄວາມຍາກລຳບາກທີ່ນຳໄປສູ່ຄວາມທຸກ. ພວກມັນຖືກເອີ້ນວ່າການທົດລອງເພາະວ່າພວກມັນຍາກທີ່ຈະປະເຊີນ, ແລະ, ແຕ່, ຖ້າພວກເຮົາມີຄວາມສັດຊື່, ພວກເຮົາອົດທົນກໍຜ່ານພວກມັນໄດ້. ໃນຂນະທີ່ການທົດລອງທົດສອບຄວາມເຊື່ອແທ້ຈິງຂອງພວກເຮົາ, ພຣະເຈົ້າໃຊ້ພວກມັນເປັນທາງເພື່ອຄວາມອົດທົນຂອງເຮົາ. ໃນທາງກົງກັນຂ້າມ, ການລໍ້ລວງເຮັດໃຫ້ພວກເຮົາເຮັດບາງສິ່ງບາງຢ່າງທີ່ຜິດແລະເປັນບາບ.

*ທ່ານໄດ້ເຫັນການລໍ້ລວງແນວໃດທີ່ໄດ້ນຳພາຄົນໃຫ້ຫຼົງທາງ?*

ການທົດລອງແມ່ນຍາກແລະພວກເຮົາມີແນວໂນ້ມທີ່ຈະຕຳນິບາງຄົນສຳລັບສິ່ງທີ່ພວກເຮົາກຳລັງຜ່ານຜ່າ. ເມື່ອເຮົາບໍ່ສາມາດຊອກຫາຄົນທີ່ຈະກ່າວໂທດ ເຮົາກໍອາດຈະກ່າວໂທດພຣະເຈົ້າ. ໃນລະຫວ່າງການທົດລອງ, ພວກເຮົາຍັງອາດຈະຖືກລໍ້ລວງໃຫ້ສົງສັຍພຣະເຈົ້າ; ພວກເຮົາສົງສັຍວ່າຄວາມດີຂອງພຣະອົງຫຼືຣິດຄຸ້ມຄອງສູງສຸດຂອງພຣະອົງ. ການທົດລອງທັງໝົດບໍ່ແມ່ນຄືກັນ. ບາງຄົນແມ່ນມີພຽງແຕ່ຄວາມບໍ່ສະດວກ. ຄົນອື່ນອີກສາມາດເຮັດໃຫ້ໝົດກຳລັງ, ດັ່ງເຊັ່ນການສູນເສັຽຄົນທີ່ຮັກໄປ. ພວກທີ່ເຄີຍປະສົບກັບການສູນເສັຽດັ່ງກ່າວມັກຈະຮູ້ສຶກເສັຽໃຈ. ບາງຄັ້ງເມື່ອພວກເຮົາທຳງານຜ່ານຄວາມໂສກເສົ້າ, ພວກເຮົາຕ້ອງການຖາມພຣະເຈົ້າ. ພວກເຮົາຈົດຈຳໄດ້ວ່າພຣະອົງຊົງຣິດຄຸ້ມຄອງສູງສຸດ, ມີອຳນາດ-ທັງໝົດ, ແລະຮັກ-ທັງໝົດ, ແລະພວກເຮົາອາດຈະສົງສັຍວ່າ: ພຣະເຈົ້າ, ເພາະວ່າພຣະອົງຮັກຂ້ານ້ອຍ, ເປັນຫຍັງພຣະອົງຈຶ່ງບໍ່ຊ່ວຍຂ້ານ້ອຍຈາກຄວາມເຈັບປວດນີ້? ເປັນຫຍັງພຣະອົງຈຶ່ງບໍ່ປ້ອງກັນຈາກການຕາຍນີ້?

ນີ້ແມ່ນບ່ອນທີ່ພຣະທັມຢາໂກໂບຊ່ວຍພວກເຮົາໄດ້. ພຣະເຈົ້າປ່ອຍໃຫ້ເຮົາປະສົບການກັບການທົດລອງແລະຄວາມຫຍຸ້ງຍາກເພື່ອລໍ້ລວງພວກເຮົາບໍ? ຄຳຕອບແມ່ນບໍ່ ສຳລັບສອງເຫດຜົນນີ້:

- **ພຣະເຈົ້າບໍ່ໄດ້ຖືກລໍ້ລວງໂດຍຄວາມຊົ່ວຮ້າຍ**. ພຣະຄັມພີບອກໄວ້ແບບນີ້. "ພຣະເຈົ້າຊົງເປັນຄວາມສວ່າງ ແລະໃນພຣະອົງບໍ່ມີຄວາມມືດເລີຍ" (1 ໂຢຮັນ 1:5ຂ). ໂດຍທັມມະຊາດ, ພຣະເຈົ້າຊົງດີ. ໃນຄວາມບໍຣິສຸດແລະໃນຄວາມດີຂອງພຣະອົງ, ພຣະອົງຈະບໍ່ມີຫຍັງກ່ຽວກັບບາບແລະຄວາມຊົ່ວ; ເພາະສະນັ້ນ, ຄວາມຊົ່ວຮ້າຍບໍ່ມີຫຍັງດຶງດູດພຣະອົງ. ນອກຈາກນັ້ນ, ທຸກສິ່ງທຸກຢ່າງທີ່ພຣະເຈົ້າໄດ້ເຮັດແມ່ນດີ. ເມື່ອພຣະອົງໄດ້ນິຣະມິດສ້າງ, ທຸກສິ່ງທຸກຢ່າງທີ່ພຣະອົງໄດ້ສ້າງແມ່ນດີ (ປຖກ. 1:31). ແລະເພາະວ່າພຣະເຈົ້າຊົງດີແລະເປັນຜູ້ຊົງສ້າງແລະແຫລ່ງຂອງທຸກສິ່ງນັ້ນແມ່ນດີ, ພຣະອົງຈຶ່ງບໍ່ສາມາດຖືກລໍ້ລວງໂດຍຄວາມຊົ່ວຮ້າຍ.
- **ພຣະເຈົ້າເອງບໍ່ໄດ້ລໍ້ລວງໃຜ.** ມັນເປັນຄວາມຈິງທີ່ພຣະເຈົ້າທົດສອບພວກເຮົາໃຫ້ຄວາມເຂັ້ມແຂງຂຶ້ນໃນຄວາມເຊື່ອຂອງພວກເຮົາ. ພຣະເຈົ້າໄດ້ທົດສອບອັບຣາຮາມເພື່ອພິສູດຄວາມຈິງຂອງຄວາມເຊື່ອຂອງລາວ (ປຖກ. 22:1-19). ໃນຂັ້ນຕອນ, ອັບຣາຮາມໄດ້ຮັບຄວາມເຂັ້ມແຂງ. ການທົດສອບແມ່ນເພື່ອເສີມສ້າງ, ແຕ່ການລໍ້ລວງເປັນອັນຕະລາຍ. ເພາະວ່າພຣະເຈົ້າຊົງດີ, ດັ່ງນັ້ນພຣະອົງຈະບໍ່ເຄີຍນຳເຮົາໄປສູ່ບາບ. ພຣະເຈົ້າມີຈຸດປະສົງທີ່ຈະເພີ່ມຄວາມເຊື່ອຂອງພວກເຮົາໃຫ້ເຂັ້ມແຂງ, ບໍ່ແມ່ນທຳລາຍມັນ. ພຣະອົງເປັນພຣະເຈົ້າທີ່ແສນດີທີ່ຈັດຫາວິທີທີ່ເຮົາຕ້ອງອົດທົນໃນຄວາມເຊື່ອ.

ແທນທີ່ຈະກ່າວໂທດພຣະເຈົ້າທຸກຄັ້ງທີ່ເຮົາປະເຊີນກັບການທົດລອງ, ເຮົາຕ້ອງເຕືອນຕົວເອງວ່າ, "ພຣະເຈົ້າບໍ່ໄດ້ເຮັດສິ່ງນີ້ເພື່ອລໍ້ລວງເຮົາໃຫ້ເຮັດບາບ." ພຣະອົງຊົງດີ ແລະຕ້ອງການຄວາມດີຂອງຂ້າພະເຈົ້າເຊັ່ນກັນ. ພຣະອົງບໍ່ໄດ້ເປັນຜູ້ທຳລາຍຄວາມເຊື່ອ ແຕ່ເປັນຜູ້ສ້າງຄວາມເຊື່ອ.

## 2. <u>ຢາໂກໂບ 1:14-15</u>

*14. ແຕ່ວ່າທຸກຄົນກໍຖືກລໍ້ລວງໃຫ້ຫຼົງ ເມື່ອກິເລດຂອງຕົນເອງຊັກຈູງແລະຍົວະເຍົ້າໃຫ້ເຮັດຕາມ. 15. ເມື່ອກິເລດຕັ້ງຮາກແລ້ວກໍໃຫ້ເກີດຄວາມຜິດບາບ ແລະເມື່ອຄວາມຜິດບາບຄົບຖ້ວນແລ້ວກໍໃຫ້ເກີດຄວາມຕາຍ.*

ພວກເຮົາໄດ້ເຫັນແລ້ວວ່າແຫຼ່ງຂອງການລໍ້ລວງແລະບາບບໍ່ແມ່ນພຣະເຈົ້າ. ແຕ່ມັນກໍບໍ່ແມ່ນມານ. ແຫຼ່ງທີ່ມານີ້ແມ່ນກິເລດຕັນຫາຂອງພວກເຮົາເອງ. ນີ້ບໍ່ໄດ້ໝາຍຄວາມວ່າມານຫຼືຄົນອື່ນບໍ່ສາມາດມີສ່ວນຮ່ວມໄດ້, ແຕ່ຄວາມປາຖນາທີ່ຈະເຮັດບາບແມ່ນຮາກຖານໝັ້ນຄົງຕັ້ງຢູ່ໃນຕົວເຮົາເອງ. ມານລໍ້ລວງເຮົາໂດຍການໃຊ້ຄວາມປາຖນາອັນຊົ່ວຮ້າຍເຫຼົ່ານັ້ນ. ທ່ານຢາໂກໂບໄດ້ໃຫ້ຮູບພາບທີ່ໜ້າຈົດຈຳຄືຮູບພາບການຫາປາເພື່ອເຮັດໃຫ້ເຫັນຈຸດຂອງລາວ. ເຮົາຖືກລໍ້ໃຈເມື່ອເຮົາຖືກ "ຊັກຈູງແລະຍົວະເຍົ້າໃຫ້ເຮັດຕາມ" ແລະລໍ້ລວງດ້ວຍກິເລດຕັນຫາ [ຂອງເຮົາ]." "ຊັກຈູງ" ໝາຍຄວາມວ່າຖືກນຳໄປຫຼືລາກອອກໄປ. ເຮົາອາດເຫັນບາງຄົນໄດ້ຖືກດຶງອອກໄປສູ່ຄວາມຕາຍຂອງລາວຢ່າງບໍ່ເຕັມໃຈ. "ຍົວະເຍົ້າ" ເປັນຊັກຊວນໄປໂດຍບາງສິ່ງບາງຢ່າງທີ່ກະຕຸ້ນຄວາມສົນໃຈ. "ຄວາມປາຖນາອັນຊົ່ວຮ້າຍ" ບົ່ງບອກເຖິງຄວາມປາຖນາອັນແຮງກ້າ ຫຼືຄວາມປາຖນາອັນໜັກໜ່ວງສຳລັບສິ່ງທີ່ຊົ່ວຮ້າຍ, ບໍ່ດີ, ຫຼືຖືກຫ້າມ.

ມັນຈະເປັນການດີຖ້າພວກເຮົາບໍ່ຕ້ອງຫຍຸ້ງກ່ຽວກັບ "ຄວາມປາຖະໜາອັນຊົ່ວຮ້າຍຂອງຕົນເອງ," ແຕ່ໃຫ້ພິຈາລະນາໜ້ອຍນຶ່ງເບິ່ງວ່າຄວາມປາຖະໜາເຫຼົ່ານີ້ມາຈາກໃສ. ດັ່ງທີ່ເຮົາໄດ້ເຫັນແລ້ວວ່າ, ທຸກສິ່ງທຸກຢ່າງທີ່ພຣະເຈົ້າສ້າງແມ່ນດີ. ຄວາມຊົ່ວຮ້າຍເຂົ້າມາໃນໂລກຂອງພວກເຮົາໂດຍຜ່ານຊາຕານ, ແລະບາບໄດ້ມາເຖິງພວກເຮົາໂດຍຜ່ານອາດາມ. ເມື່ອອາດາມໄດ້ເຮັດບາບ, ພວກເຮົາທຸກຄົນໄດ້ເຮັດບາບກັບລາວ (ໂຣມ 5:12). ດັ່ງນັ້ນ, ພວກເຮົາໄດ້ຮັບມໍລະດົກຄືຄວາມຜິດບາບຂອງອາດາມ, ຄວາມຮູ້ສຶກຜິດ, ການສໍ້ລາດບັງຫຼວງ, ແລະການກ່າວໂທດ (ຂໍ້ 13-21). ເຮົາຮູ້ວ່າເຣື່ອງນີ້ເປັນຄວາມຈິງ ເພາະການລົງໂທດຂອງບາບແມ່ນຄວາມຕາຍ—ແລະເຮົາທຸກຄົນກໍຕາຍ.

ພວກເຮົາເຮັດບາບເພາະວ່າພວກເຮົາເປັນຄົນບາບໂດຍທັມມະຊາດ (ອຟຊ 2:1-3). ນີ້ແມ່ນເຫດຜົນທີ່ພວກເຮົາຕ້ອງການຫົວໃຈໃໝ່. ເຖິງປານນັ້ນ, ເຖິງແມ່ນວ່າເປັນຄຣິສະຕຽນທີ່ມີຫົວໃຈໃໝ່, ເຮົາຍັງຕ້ອງເຊົາຄິດແບບເກົ່າ ແລະປ່ຽນໃຈໃໝ່ໂດຍວາງວິທີຄິດໃໝ່. ເມື່ອເຮົາປະເຊີນກັບການທົດລອງ, ເຮົາຖືກລໍ້ລວງໃຫ້ເຮັດຄືກັບຕອນກ່ອນເປັນຄຣິສະຕຽນ, ເຮົາປ່ອຍໃຫ້ຄວາມປາຖະໜາອັນຊົ່ວຮ້າຍນັ້ນເກີດຂຶ້ນແລະໃຫ້ມັນຄວບຄຸມ. ຮູບພາບທີ່ຢາໂກໂບໄດ້ໃຫ້ຈາກການລໍ້ລວງແມ່ນຄວາມປາຖະໜາອັນຊົ່ວຮ້າຍຂອງພວກເຮົາທີ່ຍົວະເຍົ້າເຮົາແລະຊັກຈູງພວກເຮົາໃຫ້ເຮັດຕາມຄວາມບາບ. ກິເລດຕັນຫາອັນເກົ່າ, ບາບ, ສິ່ງຊົ່ວຮ້າຍເຫຼົ່ານັ້ນ ປຽບເໝືອນກັບເຫຍື່ອລໍ້ຫາປາທີ່ຫ້ອຍຢູ່ຕໍ່ໜ້າເຮົາ, ເມື່ອເຮົາສວບກັດ, ເຮົາກໍໄດ້ຖືກດຶງເຂົ້າໄປໃນບາບ.

ເມື່ອເຮົາຍອມໃຫ້ຄວາມປາຖະໜາອັນເປັນບາບຂອງເຮົາບໍ່ຖືກກວດສອບ, ພວກມັນຊັກຈູງເຮົາແລະຍົວະເຍົ້າເຮົາໃຫ້ເຮັດຕາມບາບ. ພວກເຮົາບໍ່ພຽງແຕ່ໄດ້ຮັບພາລະກັບບາບຂອງພວກເຮົາ; ພວກເຮົາຍັງໄດ້ຮັບພາລະໜີ້ແທນງຂອງບາບຄື: **<u>ຄວາມຕາຍ</u>**. ແລະພວກເຮົາບໍ່ມີໃຜທີ່ຈະຕຳໜິນອກຈາກຕົວເຮົາເອງ. ແຕ່ຂໍໃຫ້ຈື່ຈຳຈຸດປະສົງຂອງຢາໂກໂບ. ເພິ່ນຢາກຊຸກຍູ້ເຮົາໃຫ້ອົດທົນກັບການທົດລອງຢ່າງໝັ້ນຄົງ ເຊິ່ງເປັນເຫດຜົນທີ່ທ່ານຂຽນກ່ອນໜ້ານີ້ວ່າ: “ຄົນທີ່ອົດທົນຕໍ່ການທົດລອງໃຈກໍເປັນສຸກ ເພາະເມື່ອປາກົດວ່າຜູ້ນັ້ນທົນໄດ້ແລ້ວກໍໄດ້ຮັບພວງມາລັຍແຫ່ງຊີວິດ ຊຶ່ງພຣະເຈົ້າໄດ້ຊົງສັນຍາໄວ້ແກ່ຄົນທັງຫຼາຍທີ່ຮັກພຣະອົງ." (ຂໍ້ 12).

*ທ່ານຈະອະທິບາຍຂັ້ນຕອນຂອງການລໍ້ລວງແນວໃດໃນຄຳເວົ້າຂອງທ່ານ?*

## 3. <u>ຢາໂກໂບ 1:16-18</u>

*16. ພີ່ນ້ອງທີ່ຮັກຂອງເຮົາເອີຍ, ຢ່າໄດ້ຫຼົງຜິດໄປ. 17. ການປະທານອັນດີທຸກຢ່າງ ແລະຂອງປະທານອັນດີເລີດທຸກຢ່າງຍ່ອມມາແຕ່ທາງເທິງ ແລະລົງມາຈາກພຣະບິດາແຫ່ງບັນດາດວງສວ່າງ ໃນພຣະບິດານັ້ນບໍ່ມີການປ່ຽນແປງ ແລະບໍ່ມີເງົາເນື່ອງຈາກການຊົງໝູນວຽນ. 18. ໂດຍນໍ້າພຣະທັຍຂອງພຣະອົງເອງນັ້ນ ພຣະອົງຈຶ່ງຊົງບັນດານໃຫ້ພວກເຮົາບັງເກີດດ້ວຍພຣະທັມອັນສັດຈິງ ເພື່ອພວກເຮົາຈະເປັນເໝືອນຜົນແຣກແຫ່ງສິ່ງທັງຫຼາຍທີ່ພຣະອົງຊົງສ້າງ.*

*ຂອງປະທານທີ່ດີອັນໃດແດ່ທີ່ພຣະເຈົ້າໄດ້ມອບໃຫ້ເຮົາເພື່ອຊ່ວຍປະເຊີນກັບການລໍ້ລວງ?*

ບາງຄົນອາດຄິດວ່າ ຢາໂກໂບໄດ້ແນະນຳຫົວຂໍ້ໃໝ່ໃນຂໍ້ທີ 16, ແຕ່ລາວໄດ້ກັບຄືນໄປຫາບົດບາດຂອງພຣະເຈົ້າໃນການທົດລອງແລະການລໍ້ລວງຂອງເຮົາ. ຢາໂກໂບຫັນຄວາມສົນໃຈຂອງພວກເຮົາກັບຄືນໄປຫາຄວາມດີຂອງພຣະເຈົ້າ. ຢາໂກໂບໄດ້ເນັ້ນເຖິງຄວາມດີຂອງພຣະເຈົ້າໃນສອງທາງບວກ.

- **ພຣະເຈົ້າຈັດຫາທຸກສິ່ງທີ່ດີ.** ທຸກສິ່ງທຸກຢ່າງທີ່ດີທີ່ພວກເຮົາມີປະສົບການແມ່ນມາຈາກພຣະເຈົ້າ. ໃຫ້ຄິດເບິ່ງຕາມນັ້ນ. ທວນຄືນທຸກສິ່ງທີ່ດີໃນຊີວິດຂອງທ່ານ. ບໍ່ມີສິ່ງດີອັນໃດທີ່ທ່ານໄດ້ຮັບນັ້ນບໍ່ໄດ້ມາຈາກພຣະເຈົ້າ. "ການປະທານອັນດີທຸກຢ່າງແລະການປະທານອັນດີເລີດທຸກຢ່າງຍ່ອມມາແຕ່ທາງເທິງ" (ຂໍ້ 17).
- **ພຣະເຈົ້າບໍ່ມີການປ່ຽນແປງ.** ແສງສວ່າງສາມາດປ່ຽນແປງຢ່າງຕໍ່ເນື່ອງ, ເຮັດໃຫ້ມີເງົາໃນຂະນະທີ່ພວກເຂົາຫັນໄປຕາມວົງໂຄຈອນ, ແຕ່ຜູ້ທີ່ສ້າງພວກມັນບໍ່ປ່ຽນແປງ. ພຣະອົງເປັນ "ພຣະບິດາຂອງແສງສວ່າງ." ພຣະເຈົ້າເປັນຜູ້ສ້າງແສງສວ່າງ (ປຖກ 1:14-19),

ແລະອຳນາດຄຸ້ມຄອງແລະຄວາມດີຂອງພຣະອົງໄດ້ສະທ້ອນໃນສິ່ງທີ່ຊົງສ້າງກໍຍັງມີການເຄື່ອນໄຫວຢູ່. ພວກເຮົາໄດ້ຮັບການເຕືອນໃຈເຖິງຄວາມດີແລະຄວາມຮັກຂອງພຣະອົງຜ່ານທາງເຂົາເຈົ້າ. "...ຜູ້ຊົງສ້າງດວງສວ່າງໃຫຍ່ໆ ເພາະຄວາມຮັກໝັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ ສ້າງດວງອາທິດໃຫ້ຄອງກາງເວັນ ເພາະຄວາມຮັກໝັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ ດວງຈັນແລະດາວທັງຫຼາຍໃຫ້ຄອງກາງຄືນ ເພາະຄວາມຮັກໝັ້ນຄົງຂອງພຣະອົງດຳຣົງຢູ່ເປັນນິດ (ເພງສັຣເສີນ 136:7-9).

ແທນທີ່ຈະແມ່ນພຣະເຈົ້າເປັນແຫຼ່ງຂອງການລໍ້ລວງຂອງພວກເຮົາແລະໃຫ້ເກີດຄວາມບາບຂອງພວກເຮົາ, ພຣະອົງໄດ້ເຮັດກົງກັນຂ້າມ; ພຣະອົງເຮັດໃຫ້ພວກເຮົາເກີດ "ໂດຍພຣະຄຳແຫ່ງຄວາມຈິງ" (ຂໍ້ 18). ພຣະອົງເຮັດສິ່ງນີ້ "ໂດຍການເລືອກຂອງພຣະອົງເອງ." ຄວາມລອດພົ້ນເປັນຂອງປະທານທີ່ດີອັນນຶ່ງທີ່ພວກເຮົາໄດ້ຮັບຈາກພຣະເຈົ້າ. ແລະພຣະຄຳແຫ່ງຄວາມຈິງທີ່ໃຫ້ຊີວິດແກ່ເຮົາຄືພຣະຄຳແຫ່ງຄວາມຈິງທີ່ເຮົາມີຊີວິດຢູ່ໃນແຕ່ລະວັນນີ້.

ພຣະເຈົ້າໄດ້ນຳເອົາການເກີດໃໝ່ມາຢູ່ໃນພວກເຮົາໂດຍພຣະປະສົງຂອງພຣະອົງແລະຜ່ານພຣະຄຳຂອງພຣະອົງເພື່ອວ່າ "ພວກເຮົາຈະເປັນເໝືອນຜົນແຣກຂອງການຊົງນິຣະມິດສ້າງຂອງພຣະອົງ." ຜົນແຣກເປັນສ່ວນທຳອິດຂອງການເກັບກ່ຽວທີ່ໄດ້ສັນຍາວ່າຈະມີການເກັບກ່ຽວທີ່ອຸດົມສົມບູນທີ່ຈະມາເຖິງນັ້ນ. ນັ້ນຄືສິ່ງທີ່ພວກເຮົາເປັນ. ນັ້ນຄືສິ່ງທີ່ຄວາມລອດພົ້ນຂອງພວກເຮົາເປັນຕົວແທນ. ພຣະເຈົ້າຜູ້ຊົງແສນດີກໍຫາພຽງແຕ່ເລີ້ມຕົ້ນ.

*ກຸ່ມຂອງເຮົາຈະຊ່ວຍເອົາຊະນະການລໍ້ລວງໃນຊີວິດຂອງເຮົາໄດ້ແນວໃດ?*

## ນຳໃຊ້ໃນຊີວິດ

ເມື່ອເຮົາຕົກຢູ່ໃນຄວາມບາບພວກເຮົາຈະບໍ່ຕູ່ໃສ່ຜູ້ໃດນອກຈາກຕົວເຮົາເອງ. ເລືອກນຶ່ງໃນການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ສາລະພາບ.** ຖ້າທ່ານໄດ້ຕຳໜິຄົນອື່ນຫຼືພຣະເຈົ້າສຳລັບບາບຂອງທ່ານຫຼືຄວາມຈິງທີ່ທ່ານຕົກຢູ່ໃນບາບ, ຈົ່ງສາລະພາບຕໍ່ພຣະເຈົ້າ. ຍອມຮັບຄວາມຮັບຜິດຊອບຂອງຕົນເອງແລະເບິ່ງຫາພຣະເຈົ້າເພື່ອຊ່ວຍໃຫ້ທ່ານຢືນຢູ່ແລະຕ້ານທານການດຶງຂອງບາບ.
- **ຈົດລາຍການ.** ຈົດບັນຊີສິ່ງທີ່ດີທີ່ພຣະເຈົ້າໄດ້ກະທຳຫຼືໄດ້ປະທານໃຫ້ໃນຊີວິດຂອງທ່ານ. ຕື່ມໃສ່ໃນລາຍການຂອງທ່ານການທົດລອງຫຼືຄວາມຫຍຸ້ງຍາກໃດໆທີ່ພຣະເຈົ້າໃຊ້ເພື່ອເສີມສ້າງຄວາມເຊື່ອຂອງທ່ານໃນພຣະອົງ. ໃຫ້ຄຳອະທິຖານຂອບພຣະຄຸນສຳລັບວິທີທີ່ພຣະອົງໄດ້ຊົງກະທຳໃນຊີວິດຂອງທ່ານ.
- **ແນະນຳ.** ຊ່ວຍຄົນທີ່ທ່ານຮູ້ວ່າເຂົາກຳລັງປະສົບກັບການລໍ້ລວງໂດຍການແບ່ງປັນຄວາມຈິງທີ່ທ່ານໄດ້ຄົ້ນພົບຢູ່ໃນພຣະທັມຢາໂກໂບ 1:13-18. ບໍ່ພຽງແຕ່ສຸມໃສ່ຫຼັກການທີ່ເຂົາເຈົ້າເທົ່ານັ້ນຖືກຕຳນິສຳລັບບາບຂອງເຂົາເຈົ້າແຕ່ຍົກສູງຄວາມດີຂອງພຣະເຈົ້າຜູ້ທີ່ສາມາດເດີນໄປກັບເຂົາເຈົ້າແລະເພີ້ມຄວາມເຂັ້ມແຂງໃຫ້ເຂົາເຈົ້າ.

ພວກເຮົາອາດຈະຄິດວ່າຕົວເຮົາເອງເປັນປາທີ່ສລາດກວ່າປາທັມມະດາ, ແຕ່ມັນເປັນເຣື່ອງທີ່ໜ້າສັງເກດໄດ້ວ່າເຮົາກັດເຫຍື່ອທີ່ນ້ອຍທີ່ສຸດໄດ້ງ່າຍ. ກິເລດຕັນຫາຂອງເຮົາເອງຊັກຈູງເຮົາໄປ. ໃຫ້ພວກເຮົາສາລະພາບບາບຂອງພວກເຮົາແລະຮັບຜິດຊອບສຳລັບກິເລດຕັນຫາຂອງພວກເຮົາ. ເຮົາຮູ້ຈັກພຣະອົງທີ່ສາມາດໃຫ້ເຮົາມີຊັຍຊນະຕໍ່ການລໍ້ລວງເມື່ອເຮົາຫັນໄປຫາພຣະອົງ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PA**